ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ ເລກທີ 073 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20/7/2009

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍແນວລາວສ້າງຊາດ

~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 131/ສພຊ, ລົງວັນທີ 8 ກໍລະກົດ 2009 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍແນວລາວສ້າງຊາດ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 50/ຄປຈ, ລົງວັນທີ 16 ກໍລະກົດ 2009.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*<u>ມາດຕາ 1</u>* : ປະກາດໃຊ້ກົດໝາຍວ່າດ້ວຍ ແນວລາວສ້າງຊາດ.

*<u>ມາດຕາ 2</u>* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 131 /ສພຊ

# ມະຕິຕົກລົງ
ຂອງ
ສະພາແຫ່ງຊາດ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ແນວລາວສ້າງຊາດ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ແນວລາວສ້າງຊາດ ໃນວາລະປະຊຸມຕອນບ່າຍຂອງວັນທີ 8 ກໍລະກົດ 2009,

### ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ແນວລາວສ້າງຊາດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 8 ກໍລະກົດ 2009

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 01 /ສພຊ
ນະຄອນຫລວງວຽງຈັນ, ວັນທີ 8 ກໍລະກົດ 2009

# ກົດໝາຍ
# ວ່າດ້ວຍ ແນວລາວສ້າງຊາດ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍ ແນວລາວສ້າງຊາດ ກໍານົດ ຫລັກການ, ລະບຽບການ, ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາ ຂອງແນວລາວສ້າງຊາດ ເພື່ອຮັບປະກັນ ການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນສູງ ແນໃສ່ເຕົ້າໂຮມຄວາມສາມັກຄີ, ປຸກລະດົມຄວາມຕື່ນຕົວ, ນໍ້າໃຈຮັກຊາດ, ຮັກລະບອບໃໝ່ ຂອງປະຊາຊົນລາວບັນດາເຜົ່າ ຢູ່ພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມເຂັ້ມແຂງ, ຮັ່ງມີ, ສີວິໄລ ແລະ ຍຸຕິທໍາ.

**ມາດຕາ 2. ແນວລາວສ້າງຊາດ**

ແນວລາວສ້າງຊາດ ແມ່ນ ອົງການຈັດຕັ້ງສໍາພັນທາງການເມືອງຂອງທົ່ວສັງຄົມ, ເປັນສະຫະພັນສະໝັກໃຈ ທີ່ສ້າງຂຶ້ນບົນພື້ນຖານຄວາມຕື່ນຕົວ ຂອງອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນ ໃຫ້ແກ່ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງ ຕົວແທນຊາວລາວ ທີ່ດໍາລົງຊີວິດຢູ່ຕ່າງປະເທດ.

ແນວລາວສ້າງຊາດ ສືບທອດ ແລະ ເສີມຂະຫຍາຍມູນເຊື້ອ ອັນສະຫງ່າລາສີ ຂອງແນວລາວອິດສະລະ ແລະ ແນວລາວຮັກຊາດ ຊຶ່ງໄດ້ເຕົ້າໂຮມຄວາມສາມັກຄີປະຊາຊົນລາວບັນດາເຜົ່າ ເຂົ້າໃນການຕໍ່ສູ້ກູ້ຊາດໃນເມື່ອກ່ອນ ແລະ ການປະຕິບັດສອງໜ້າທີ່ຍຸດທະສາດໃນປັດຈຸບັນ.

ມາດຕາ 3. **ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພາຄີຂອງແນວລາວສ້າງຊາດ ໝາຍເຖິງ** ການຈັດຕັ້ງ ແລະ ບຸກຄົນ ທີ່ເປັນຕົວແທນ ໃຫ້ແກ່ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ຊຶ່ງເຄື່ອນໄຫວຕາມກົດລະບຽບ ແລະ ໂຄງການດຳເນີນງານ ຂອງແນວລາວສ້າງຊາດ. ແຕ່ການຈັດຕັ້ງ ທີ່ເປັນພາຄີນັ້ນ ຍັງຮັກສາຄວາມເປັນເອກະລາດ ໃນການເຄື່ອນໄຫວວຽກງານ ຕາມລະບຽບກົດໝາຍສະເພາະຂອງຕົນຢູ່; ການຈັດຕັ້ງທີ່ເປັນພາຄີນັ້ນ ຄັດເລືອກຕົວແທນຂອງຕົນເຂົ້າເປັນກຳມະການແນວລາວສ້າງຊາດ;
2. **ສຳພັນທາງການເມືອງ ໝາຍເຖິງ** ການເຕົ້າໂຮມ ການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນ ໃຫ້ແກ່ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຊາວລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ໃຫ້ເປັນກ້ອນກຳລັງທີ່ມີການຈັດຕັ້ງຢ່າງກວ້າງຂວາງ ເພື່ອປະຕິບັດຈຸດໝາຍລວມຂອງຊາດ;
3. **ພື້ນຖານການເມືອງ ໝາຍເຖິງ** ແນວລາວສ້າງຊາດ ທີ່ໄດ້ເຂົ້າຮ່ວມສຶກສາອົບຮົມ, ປຸກລະດົມ ແລະ ເຕົ້າໂຮມ ກຳລັງແຮງຂອງທົ່ວປວງຊົນ ເຂົ້າໃນການປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ, ປະກອບສ່ວນເຂົ້າໃນການສ້າງ, ປັບປຸງ ແລະ ປົກປັກຮັກສາອຳນາດລັດ ປະຊາທິປະໄຕ ປະຊາຊົນ;
4. **ອົງການຈັດຕັ້ງການເມືອງ-ສັງຄົມ ໝາຍເຖິງ** ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ສະຫະພັນນັກຮົບເກົ່າ;
5. **ອົງການຈັດຕັ້ງສັງຄົມ ໝາຍເຖິງ** ສະຫະພັນ, ສະມາຄົມ, ມູນນິທິ, ສະໂມສອນ ແລະ ອື່ນໆ;
6. **ສະຫະພັນສະໝັກໃຈ ໝາຍເຖິງ** ການຈັດຕັ້ງ ແລະ ບຸກຄົນ ທີ່ເຂົ້າເປັນພາຄີຂອງແນວລາວສ້າງຊາດ ດ້ວຍຄວາມຕື່ນຕົວ, ສະໝັກໃຈ ແລະ ເຫັນດີເຫັນພ້ອມກັບກົດລະບຽບ ແລະ ໂຄງການດຳເນີນງານຂອງແນວລາວສ້າງຊາດ;
7. **ຄະນະກຳມະການແນວລາວສ້າງຊາດ ໝາຍເຖິງ** ການຈັດຕັ້ງຂອງແນວລາວສ້າງຊາດແຕ່ລະຂັ້ນ ຊຶ່ງປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ ໂດຍແມ່ນກອງປະຊຸມໃຫຍ່, ກອງປະຊຸມສາມັນ ຫລື ກອງປະຊຸມວິສາມັນຂັ້ນນັ້ນ ເປັນຜູ້ຮັບຮອງເອົາ;
8. **ກຳມະການແນວລາວສ້າງຊາດ ໝາຍເຖິງ** ບຸກຄົນທີ່ສັງກັດຢູ່ໃນຄະນະກຳມະການແນວລາວສ້າງຊາດ ຊຶ່ງເປັນຕົວແທນ ໃຫ້ແກ່ບັນດາອົງການຈັດຕັ້ງ, ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ແລະ ຕົວແທນຊາວລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ.

**ມາດຕາ 4. ນະໂຍບາຍຂອງລັດ ກ່ຽວກັບແນວລາວສ້າງຊາດ**

ລັດ ຮັບຮູ້ແນວລາວສ້າງຊາດ ເປັນອົງການຈັດຕັ້ງໜຶ່ງ ທີ່ສຳຄັນຂອງລະບົບການເມືອງ ແຫ່ງ ສປປ ລາວ ແລະ ມີນະໂຍບາຍ ປຸກລະດົມ, ຊຸກຍູ້, ສົ່ງເສີມ ການຈັດຕັ້ງ ແລະ ບຸກຄົນ ໃນສັງຄົມ ໃຫ້ເຂົ້າຮ່ວມໃນການເຄື່ອນໄຫວວຽກງານ, ປະຕິບັດຕາມກົດລະບຽບ ແລະໂຄງການດຳເນີນງານ ຂອງແນວລາວສ້າງຊາດ ກໍຄືແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ.

ລັດ ສົ່ງເສີມ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ເພື່ອຮັບປະກັນໃຫ້ແນວລາວສ້າງຊາດ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນໄດ້ເປັນຢ່າງດີ ເປັນຕົ້ນ ການປະກອບບຸກຄະລາກອນ, ພາຫະນະອຸປະກອນ, ງົບປະມານ ແລະ ການຊອກແຫລ່ງລາຍຮັບ ຕາມລະບຽບກົດໝາຍ.

**ມາດຕາ 5. ຫລັກການ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ຈັດຕັ້ງ ແລະ ເຄື່ອນໄຫວ ບົນພື້ນຖານ ຫລັກການ ຕົ້ນຕໍ ດັ່ງນີ້:

1. ຕື່ນຕົວ, ສະໝັກໃຈ;
2. ປະຕິບັດຕາມ ກົດລະບຽບ ແລະ ໂຄງການດຳເນີນງານ ທີ່ສອດຄ່ອງກັບ ລັດຖະທຳມະນູນ ແລະ ກົດໝາຍ;
3. ລວມສູນປະຊາທິປະໄຕ;
4. ປຶກສາຫາລື ຢ່າງມີປະຊາທິປະໄຕ, ປະສານສົມທົບ ແລະ ເປັນເອກະພາບ ໃນການເຄື່ອນໄຫວ.

**ມາດຕາ 6. ການຮ່ວມມືສາກົນ**

ລັດ ສົ່ງເສີມ, ຊຸກຍູ້ໃຫ້ແນວລາວສ້າງຊາດ ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ສ້າງພະນັກງານ, ຍາດແຍ່ງການສະໜັບສະໜູນ ແລະ ຊ່ວຍເຫລືອ ເພື່ອເຮັດໃຫ້ວຽກງານແນວລາວສ້າງຊາດ ມີຄວາມເຂັ້ມແຂງ, ມີປະສິດທິຜົນ ແລະ ປະກອບສ່ວນເພີ່ມທະວີສາຍພົວພັນມິດຕະພາບ ລະຫວ່າງປະຊາຊາດ ໃນການຮ່ວມມື ແລະ ການພັດທະນາ ລວມທັງສະໜັບສະໜູນຂະບວນການຕໍ່ສູ້ ເພື່ອສັນຕິພາບ ແລະ ຄວາມກ້າວໜ້າທາງສັງຄົມ ຢູ່ໃນໂລກ.

## ໝວດທີ II
## ແນວລາວສ້າງຊາດ

**ມາດຕາ 7. ທີ່ຕັ້ງ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ແມ່ນ ພາກສ່ວນໜຶ່ງໃນລະບົບການເມືອງ ແຫ່ງ ສປປ ລາວ ໂດຍແມ່ນ ພັກ ປະຊາຊົນ ປະຕິວັດລາວ ເປັນແກນນຳ, ທັງເປັນພື້ນຖານການເມືອງໜຶ່ງ ຂອງລະບອບປະຊາທິປະໄຕ ປະຊາຊົນ.

**ມາດຕາ 8. ພາລະບົດບາດ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີ ພາລະບົດບາດ ຕົ້ນຕໍ ດັ່ງນີ້:

1. ສ້າງ, ປັບປຸງ ກຳລັງແຮງ ທົ່ວປວງຊົນ ແລະ ເປັນຄັນທຸງ ເຕົ້າໂຮມຄວາມສາມັກຄີ ປອງດອງ ປະຊາຊົນລາວບັນດາເຜົ່າ;
2. ສຶກສາອົບຮົມ, ປຸກລະດົມ ປວງຊົນລາວບັນດາເຜົ່າ ເຂົ້າຮ່ວມໃນພາລະກິດ ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;
3. ເສີມຂະຫຍາຍສິດເປັນເຈົ້າ, ປົກປັກຮັກສາ ວັດທະນະທຳ, ຮີດຄອງ ປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ;
4. ເປັນບ່ອນສ່ອງແສງ ມານະຈິດ, ຄວາມມຸ່ງມາດປາດຖະໜາ ແລະ ຄວາມຄິດຄວາມເຫັນຂອງປະຊາຊົນລາວບັນດາເຜົ່າ;
5. ເປັນໃຈກາງປະສານສົມທົບ ກັບພາຄີຂອງຕົນ.

**ມາດຕາ 9. ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າ ທັງຢູ່ ພາຍໃນ ແລະ ຕ່າງປະເທດ;
2. ສະເໜີ ສ້າງຮ່າງກົດໝາຍ ແລະ ສ້າງນິຕິກຳອື່ນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຕົນ;
3. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ ໃນການປະຕິບັດ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ;
4. ເກັບກຳ ຄຳຄິດຄຳເຫັນ, ຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊົນຄົນ, ສາສະໜາ, ເພດ, ໄວ ເພື່ອສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ;
5. ສະເໜີບຸກຄະລາກອນຂອງຕົນ, ປະກອບຄຳເຫັນກ່ຽວກັບບຸກຄະລາກອນຂອງພາກສ່ວນອື່ນ ທີ່ເປັນຕົວແທນຂອງປະຊາຊົນ ອອກສະໝັກຮັບເລືອກຕັ້ງ ເຂົ້າໃນອົງການຈັດຕັ້ງການເມືອງ, ສະພາແຫ່ງຊາດ ແລະ ອົງການຈັດຕັ້ງອື່ນ ຕາມລະບຽບການ;
6. ເຂົ້າຮ່ວມການປັບປຸງອຳນາດລັດ ປະຊາທິປະໄຕ ປະຊາຊົນ, ຕິດຕາມ, ກວດກາ ການເຄື່ອນໄຫວ ຂອງອົງການລັດບໍລິຫານ, ສະມາຊິກສະພາແຫ່ງຊາດ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ພະນັກງານ ແລະ ລັດຖະກອນທົ່ວໄປ;
7. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ອົງການຈັດຕັ້ງພາຄີ, ປະຊາຊົນລາວບັນດາເຜົ່າ ແລະ ເຂົ້າຮ່ວມການໄກ່ເກ່ຍຂໍ້ຂັດແຍ່ງ ຕາມພາລະບົດບາດຂອງຕົນ;

8. ປະກອບສ່ວນ ປົກປັກຮັກສາ, ເສີມຂະຫຍາຍ ມູນເຊື້ອຮັກຊາດ, ວັດທະນະທຳ ແລະ ຮີດຄອງປະເພນີ ອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ;
9. ຖ່າຍທອດຄວາມຮູ້, ບົດຮຽນ, ປະສົບການ ແລະ ມູນເຊື້ອອັນດີງາມ ຂອງແນວລາວສ້າງຊາດ ໃຫ້ແກ່ຄົນຮຸ່ນຫລັງ;
10. ເສີມຂະຫຍາຍ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງປະຊາຊົນລາວບັນດາເຜົ່າ ກັບປະຊາຊົນບັນດາປະເທດ ໃນພາກພື້ນ ແລະ ໃນໂລກ.

## ໝວດທີ III
## ລະບົບການຈັດຕັ້ງ ຂອງແນວລາວສ້າງຊາດ

### ມາດຕາ 10. ລະບົບການຈັດຕັ້ງ ຂອງແນວລາວສ້າງຊາດ

ລະບົບການຈັດຕັ້ງ ຂອງແນວລາວສ້າງຊາດ ປະກອບດ້ວຍ:

1. ສູນກາງແນວລາວສ້າງຊາດ;
2. ແນວລາວສ້າງຊາດ ແຂວງ, ນະຄອນ;
3. ແນວລາວສ້າງຊາດ ເມືອງ, ເທດສະບານ;
4. ແນວລາວສ້າງຊາດ ບ້ານ.

### ມາດຕາ 11. ໂຄງປະກອບ ຂອງແນວລາວສ້າງຊາດ

ແນວລາວສ້າງຊາດ ແຕ່ລະຂັ້ນ ມີ ໂຄງປະກອບບຸກຄະລາກອນ ດັ່ງນີ້:

- ປະທານແນວລາວສ້າງຊາດ;
- ຮອງປະທານແນວລາວສ້າງຊາດ;
- ກຳມະການແນວລາວສ້າງຊາດ.

ສຳລັບໂຄງປະກອບການຈັດຕັ້ງ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 12. ສິດ ແລະ ໜ້າທີ່ ຂອງປະທານແນວລາວສ້າງຊາດ

ປະທານແນວລາວສ້າງຊາດ ແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຊີ້ນຳ ການສ້າງແຜນການ, ແຜນງານ, ໂຄງການລະອຽດຂັ້ນຂອງຕົນ ໂດຍສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ໂຄງການດຳເນີນງານ ແລະ ມະຕິກອງປະຊຸມໃຫຍ່ ຂອງແນວລາວສ້າງຊາດ ແລະ ແນະນຳ ການຈັດຕັ້ງປະຕິບັດ;
2. ປຶກສາຫາລື, ປະສານສົມທົບ ກ່ຽວກັບວຽກງານແນວລາວສ້າງຊາດ ກັບອົງການຈັດຕັ້ງພັກ, ລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ການຈັດຕັ້ງ ແລະ ບຸກຄົນ ທີ່ເປັນພາຄີ;

3. ປະກອບຄໍາຄິດຄໍາເຫັນ, ສະເໜີບັນຫາຕ່າງໆ ກ່ຽວກັບແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ທີ່ພົວພັນເຖິງ ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງປະຊາຊົນລາວບັນດາເຜົ່າ;
4. ເປັນຜູ້ຕິກລົງ, ຮຽກໂຮມ ທັງເປັນປະທານ ກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂັ້ນຂອງຕົນ;
5. ຊຸກຍູ້, ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານ ຂອງແນວລາວສ້າງຊາດ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;
6. ໄດ້ຮັບຂໍ້ມູນຂ່າວສານຕ່າງໆ ຈາກອົງການຈັດຕັ້ງອື່ນ ທີ່ກ່ຽວຂ້ອງ;
7. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ຕາມຄວາມຮັບຜິດຊອບ ແລະ ລະບຽບກົດໝາຍ;
8. ລາຍງານສະພາບວຽກງານແນວລາວສ້າງຊາດ ຕໍ່ຂັ້ນເທິງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມລະບຽບການ.

**ມາດຕາ 13. ສິດ ແລະ ໜ້າທີ່ ຂອງຮອງປະທານແນວລາວສ້າງຊາດ**

ຮອງປະທານແນວລາວສ້າງຊາດ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ຊ່ວຍປະທານແນວລາວສ້າງຊາດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານລວມ ແລະ ຮັບຜິດຊອບວຽກງານຈໍານວນໜຶ່ງ ຕາມການມອບໝາຍ ຂອງປະທານແນວລາວສ້າງຊາດ.

ໃນກໍລະນີ ທີ່ປະທານແນວລາວສ້າງຊາດ ຕິດຂັດ ແມ່ນ ຮອງປະທານແນວລາວສ້າງຊາດ ຜູ້ທີ່ຖືກມອບໝາຍ ຈາກປະທານນັ້ນ ເປັນຜູ້ວ່າການແທນ.

**ມາດຕາ 14. ສິດ ແລະ ໜ້າທີ່ ຂອງກໍາມະການແນວລາວສ້າງຊາດ**

ກໍາມະການແນວລາວສ້າງຊາດ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິຂອງກອງປະຊຸມ, ກົດລະບຽບ ແລະ ໂຄງການດໍາເນີນງານ ຂອງແນວລາວສ້າງຊາດ;
2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິຂອງກອງປະຊຸມ, ກົດລະບຽບ ແລະ ໂຄງການດໍາເນີນງານ ຂອງແນວລາວສ້າງຊາດ ໃຫ້ທົ່ວສັງຄົມເຂົ້າໃຈຢ່າງເລິກເຊິ່ງ ແລະ ປຸກລະດົມປະຊາຊົນລາວບັນດາເຜົ່າ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ;
3. ແນະນໍາ, ຊ່ວຍເຫລືອ, ຕິດຕາມ, ກວດກາ ການປະຕິບັດວຽກງານ ກ່ຽວກັບແນວລາວສ້າງຊາດ ຕາມລະບຽບກົດໝາຍ ແລະ ຕາມການມອບໝາຍ ຂອງປະທານແນວລາວສ້າງຊາດ ຂັ້ນຂອງຕົນ;
4. ເຂົ້າຮ່ວມກອງປະຊຸມຕ່າງໆ ຕາມການເຊື້ອເຊີນ;
5. ເຂົ້າຮ່ວມການໄກ່ເກ່ຍຂໍ້ຂັດແຍ່ງ ຕາມຄວາມຮັບຜິດຊອບຂອງຕົນ;

6. ພົວພັນ, ຕິດແທດກັບຮາກຖານ, ປະຊາຊົນລາວບັນດາເຜົ່າ ແລະ ປະສານສົມທົບກັບພາກ ສ່ວນອື່ນທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານແນວລາວສ້າງຊາດ;
7. ໄດ້ຮັບ ຂໍ້ມູນຂ່າວສານ ແລະ ນະໂຍບາຍຕ່າງໆ ຕາມລະບຽບການ;
8. ສະຫລຸບ, ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ແລະ ຂໍທິດຊີ້ນໍາຈາກປະທານແນວລາວສ້າງຊາດຂັ້ນຂອງຕົນ.

## ໝວດທີ IV
## ພາຄີ ຂອງແນວລາວສ້າງຊາດ

### ມາດຕາ 15. ພາຄີ ຂອງແນວລາວສ້າງຊາດ

ພາຄີຂອງແນວລາວສ້າງຊາດ ປະກອບດ້ວຍ:

1. ພາຄີທີ່ເປັນການຈັດຕັ້ງ: ອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ ແລະ ອົງການຈັດຕັ້ງສັງຄົມ;
2. ພາຄີທີ່ເປັນບຸກຄົນ ຊຶ່ງເປັນຕົວແທນໃຫ້ແກ່ ຊົນຊັ້ນ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຊາວລາວ ທີ່ດໍາລົງຊີວິດຢູ່ຕ່າງປະເທດ.

### ມາດຕາ 16. ເງື່ອນໄຂ ການເຂົ້າເປັນພາຄີ ຂອງແນວລາວສ້າງຊາດ

ການເຂົ້າເປັນພາຄີ ຂອງແນວລາວສ້າງຊາດ ມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີນໍ້າໃຈຮັກຊາດ, ມີຄວາມກ້າວໜ້າ, ມີບົດບາດ, ໄດ້ຮັບຄວາມເຊື່ອຖື ຢູ່ໃນທ້ອງຖິ່ນຂອງຕົນ;
2. ມີຄວາມຕື່ນຕົວ, ສະໝັກໃຈ;
3. ມີຄວາມສາມາດ ເຕົ້າໂຮມຄວາມສາມັກຄີ ປອງດອງ ຢ່າງກວ້າງຂວາງ;
4. ມີຄວາມເຫັນດີ ເຫັນພ້ອມ ແລະ ປະຕິບັດ ລະບຽບກົດໝາຍ, ໂຄງການດໍາເນີນງານ ແລະ ກົດລະບຽບ ຂອງແນວລາວສ້າງຊາດ;
5. ໄດ້ຮັບການເຫັນດີ ຈາກຄະນະກໍາມະການແນວລາວສ້າງຊາດ ຂັ້ນທີ່ກ່ຽວຂ້ອງ.

### ມາດຕາ 17. ສິດ ຂອງພາຄີ ແນວລາວສ້າງຊາດ

ພາຄີ ຂອງແນວລາວສ້າງຊາດ ມີ ສິດ ຕົ້ນຕໍ ດັ່ງນີ້:

1. ຊອກຮູ້, ເກັບກໍາຂໍ້ມູນ, ຂ່າວສານ, ຄວາມມຸ່ງມາດປາຖະໜາ, ຄວາມຂັດຂ້ອງໝອງໃຈ ຂອງປະຊາຊົນລາວບັນດາເຜົ່າ;
2. ປຶກສາຫາລື ແລະ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ ຄໍາສະເໜີ ຂອງປະຊາຊົນ;
3. ສະເໜີ ຖາມ, ຕໍານິສິ່ງຂ່າວ, ປະກອບຄໍາຄິດຄໍາເຫັນ ກ່ຽວກັບການຈັດຕັ້ງ ແລະ ການ

ເຄື່ອນ ໄຫວ ຂອງແນວລາວສ້າງຊາດ;

4. ປະສານສົມທົບ ກັບຄະນະກຳມະການແນວລາວສ້າງຊາດ ຂັ້ນທີ່ກ່ຽວຂ້ອງ ໃນການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງຕົນ ແນໃສ່ປຸກລະດົມປະຊາຊົນ ເຂົ້າໃນການປະຕິບັດວຽກງານແນວລາວສ້າງຊາດ;
5. ປະກອບຄຳຄິດຄຳເຫັນ ກ່ຽວກັບແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;
6. ໄດ້ຮັບການປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມລະບຽບກົດໝາຍ;
7. ສະເໜີຕົວແທນຂອງຕົນ ເຂົ້າຮັບການແຕ່ງຕັ້ງ ເປັນຄະນະກຳມະການແນວລາວສ້າງຊາດຂັ້ນຕ່າງໆ;
8. ໄດ້ຮັບຂໍ້ມູນ, ຂ່າວສານ ກ່ຽວກັບການເຄື່ອນໄຫວ ຂອງແນວລາວສ້າງຊາດ.

**ມາດຕາ 18. ໜ້າທີ່ ຂອງພາຄີ ແນວລາວສ້າງຊາດ**

ພາຄີ ຂອງແນວລາວສ້າງຊາດ ມີ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ, ໂຄສະນາ, ປຸກລະດົມປະຊາຊົນ ປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ໂຄງການດຳເນີນງານຂອງແນວລາວສ້າງຊາດ;
2. ປະຕິບັດກົດລະບຽບ ແລະ ໂຄງການດຳເນີນງານ ຂອງແນວລາວສ້າງຊາດ ໃຫ້ມີປະສິດທິຜົນ;
3. ຊຸກຍູ້ບັນດາການຈັດຕັ້ງຂອງຕົນ ໃຫ້ປະຕິບັດນະໂຍບາຍສາມັກຄີທົ່ວປວງຊົນ ແລະ ເຂົ້າຮ່ວມວຽກງານແນວລາວສ້າງຊາດ ເປັນຕົ້ນ ຢູ່ຮາກຖານ;
4. ເຂົ້າຮ່ວມ ຂົນຂວາຍການສ້າງຕັ້ງ ແລະ ພັດທະນາກອງທຶນ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ແລະ ບັນຫາອື່ນ;
5. ພົວພັນ ແລະ ຮ່ວມມື ກັບບັນດາອົງການຈັດຕັ້ງ ແລະ ບຸກຄົນ ທີ່ບໍ່ເປັນພາຄີຂອງແນວລາວສ້າງຊາດ ເພື່ອຮ່ວມກັນພັດທະນາ;
6. ສະຫລຸບ ແລະ ລາຍງານ ການປະຕິບັດໜ້າທີ່ວຽກງານຂອງຕົນ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນ ໃຫ້ຄະນະກຳມະການແນວລາວສ້າງຊາດ ຕາມລະບຽບການ.

## ໝວດທີ V
## ກອງປະຊຸມ ຂອງແນວລາວສ້າງຊາດ

**ມາດຕາ 19. ປະເພດກອງປະຊຸມ**

ກອງປະຊຸມ ຂອງແນວລາວສ້າງຊາດ ມີ ສາມ ປະເພດ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມສາມັນ;
3. ກອງປະຊຸມວິສາມັນ.

**ມາດຕາ 20. ກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ ແມ່ນ ກອງປະຊຸມຜູ້ແທນແນວລາວສ້າງຊາດ ທົ່ວປະເທດ, ແຂວງ, ນະຄອນ, ເມືອງ, ເທດສະບານ ຊຶ່ງຫ້າປີໃດເປີດຂຶ້ນເທື່ອໜຶ່ງ ໂດຍແມ່ນປະທານແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ຮຽກໂຮມ. ກ່ອນຈະເປີດກອງປະຊຸມໃຫຍ່ນັ້ນ ປະທານແນວລາວສ້າງຊາດ ຕ້ອງໄດ້ແຈ້ງໄປຍັງກຳມະການແນວລາວສ້າງຊາດຂັ້ນຂອງຕົນ ແລະ ການຈັດຕັ້ງແນວລາວສ້າງຊາດຂັ້ນລຸ່ມຮັບຊາບກ່ອນໜຶ່ງປີ.

ສຳລັບກອງປະຊຸມໃຫຍ່ແນວລາວສ້າງຊາດບ້ານ ແມ່ນ ສາມປີໃດເປີດຂຶ້ນເທື່ອໜຶ່ງ ໂດຍແມ່ນປະທານແນວລາວສ້າງຊາດບ້ານນັ້ນ ເປັນຜູ້ຮຽກໂຮມ ແລະ ແຈ້ງໃຫ້ກຳມະການແນວລາວສ້າງຊາດບ້ານ ຮູ້ລ່ວງໜ້າກ່ອນຫົກເດືອນ.

ໃນກໍລະນີ ທີ່ມີຄວາມຈຳເປັນ ກອງປະຊຸມໃຫຍ່ ຈະເປີດຂຶ້ນກ່ອນ ຫລື ຫລັງ ກຳນົດເວລາດັ່ງກ່າວກໍໄດ້ ຕາມທີ່ໄດ້ກຳນົດໄວ້ ໃນກົດລະບຽບຂອງແນວລາວສ້າງຊາດ.

**ມາດຕາ 21. ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການເມືອງ;
2. ຄົ້ນຄວ້າ ແລະ ຮັບຮອງເອົາການປັບປຸງ ກົດລະບຽບ ແລະ ໂຄງການດຳເນີນງານ ຂອງແນວລາວສ້າງຊາດ ສຳລັບກອງປະຊຸມໃຫຍ່ ຜູ້ແທນແນວລາວສ້າງຊາດ ທົ່ວປະເທດ;
3. ພິຈາລະນາ ແລະ ຮັບຮອງເອົາ ຄະນະກຳມະການແນວລາວສ້າງຊາດຊຸດໃໝ່ ຕາມການສະເໜີຂອງປະທານແນວລາວສ້າງຊາດຊຸດເກົ່າ ທີ່ເປັນປະທານກອງປະຊຸມ, ຈາກນັ້ນ ຄະນະກຳມະການແນວລາວສ້າງຊາດຊຸດໃໝ່ ຈຶ່ງເລືອກເອົາປະທານກອງປະຊຸມແລ້ວດຳເນີນກອງປະຊຸມຄັ້ງປະຖົມມະລຶກ ເພື່ອພິຈາລະນາ ແລະ ຮັບຮອງເອົາປະທານ ແລະ ບັນດາຮອງປະທານຄະນະກຳມະການແນວລາວສ້າງຊາດ ຕາມການສະເໜີ ຂອງປະທານກອງປະຊຸມນັ້ນ;
4. ພິຈາລະນາ ບັນຫາສຳຄັນຕ່າງໆ ທີ່ເຫັນວ່າມີຄວາມຈຳເປັນ;
5. ຮັບຮອງເອົາມະຕິກອງປະຊຸມໃຫຍ່ ແນວລາວສ້າງຊາດ ຂັ້ນຂອງຕົນ.

**ມາດຕາ 22. ກອງປະຊຸມສາມັນ**

ກອງປະຊຸມສາມັນ ແມ່ນ ກອງປະຊຸມຄົບຄະນະກຳມະການແນວລາວສ້າງຊາດ ປະຈຳປີ ໂດຍແມ່ນປະທານແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

ກ່ອນເປີດກອງປະຊຸມນັ້ນ ປະທານແນວລາວສ້າງຊາດ ຕ້ອງແຈ້ງໄປຍັງຄະນະກຳມະການ ຂັ້ນຂອງຕົນ ແລະ ການຈັດຕັ້ງ ແນວລາວສ້າງຊາດຂັ້ນລຸ່ມ ຮັບຊາບກ່ອນສາມເດືອນ. ກອງປະຊຸມສາມັນ ຕ້ອງມີກຳມະການແນວລາວສ້າງຊາດ ເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນ ກຳມະການທັງໝົດ ຈຶ່ງສາມາດເປີດ ກອງປະຊຸມໄດ້. ນອກຈາກ ບັນດາກຳມະການແນວລາວສ້າງຊາດແລ້ວ ກໍສາມາດເຊີນ ຄະນະນຳຂອງການຈັດຕັ້ງ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ເຂົ້າຮ່ວມນຳ.

### ມາດຕາ 23. ສິດ ແລະ ໜ້າທີ່ ຂອງກອງປະຊຸມສາມັນ

ກອງປະຊຸມສາມັນ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ແລະ ຮັບຮອງເອົາບົດສະຫລຸບການເຄື່ອນໄຫວ ໃນປີຜ່ານມາ, ທິດທາງໜ້າທີ່ວຽກງານໃນຕໍ່ໜ້າ ຂອງຄະນະກຳມະການແນວລາວສ້າງຊາດ ຂັ້ນຂອງຕົນ;
2. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງບັນຫາສຳຄັນຕ່າງໆ ທີ່ກອງປະຊຸມຍົກຂຶ້ນ;
3. ຄົ້ນຄວ້າ ແລະ ຮັບຮອງເອົາການສະເໜີ ການປັບປຸງການຈັດຕັ້ງ ແລະ ການເພີ່ມເຕີມກຳມະການແນວລາວສ້າງຊາດ ຂັ້ນຂອງຕົນ ເມື່ອມີຄວາມຈຳເປັນ;
4. ພິຈາລະນາ ແລະ ຕົກລົງຮັບເອົາການຈັດຕັ້ງ ຫລື ບຸກຄົນທີ່ເປັນຕົວແທນໃດໜຶ່ງ ເຂົ້າເປັນພາຄີ ຂອງແນວລາວສ້າງຊາດ ໃນຂັ້ນຂອງຕົນ;
5. ຮັບຮອງເອົາມະຕິກອງປະຊຸມ ແນວລາວສ້າງຊາດ ຂັ້ນຂອງຕົນ.

### ມາດຕາ 24. ກອງປະຊຸມວິສາມັນ

ກອງປະຊຸມວິສາມັນ ແມ່ນ ກອງປະຊຸມ ທີ່ໄດ້ເປີດຂຶ້ນ ໃນລະຫວ່າງສອງກອງປະຊຸມສາມັນ ເພື່ອພິຈາລະນາບັນຫາສຳຄັນທີ່ຈຳເປັນ ແລະ ຮີບດ່ວນ ຕາມການສະເໜີຂອງກອງປະຊຸມ ປະທານ ແລະ ຮອງປະທານ ຫລື ຢ່າງໜ້ອຍໜຶ່ງສ່ວນສີ່ ຂອງຈຳນວນກຳມະການແນວລາວສ້າງຊາດ ທັງໝົດໃນຂັ້ນນັ້ນ ແລະ ຕ້ອງໃຫ້ມີ ກຳມະການແນວລາວສ້າງຊາດ ເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນກຳມະການທັງໝົດ ໂດຍແມ່ນປະທານແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

### ມາດຕາ 25. ມະຕິກອງປະຊຸມ

ກອງປະຊຸມໃຫຍ່, ກອງປະຊຸມສາມັນ ຫລື ກອງປະຊຸມວິສາມັນ ຕ້ອງມີມະຕິຂອງຕົນ.

ມະຕິກອງປະຊຸມດັ່ງກ່າວ ຈະມີຄຸນຄ່ານຳໃຊ້ໄດ້ ກໍຕໍ່ເມື່ອໄດ້ຮັບສຽງສ່ວນຫຼາຍ ຂອງຈຳນວນຜູ້ແທນສົມບູນ ທີ່ເຂົ້າຮ່ວມສຳລັບກອງປະຊຸມໃຫຍ່ ຫລື ຈາກກຳມະການແນວລາວສ້າງຊາດຂັ້ນຂອງຕົນທີ່ເຂົ້າຮ່ວມ ສຳລັບກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

## ໝວດທີ VI
## ການເງິນ ແລະ ງົບປະມານ ຂອງແນວລາວສ້າງຊາດ

**ມາດຕາ 26. ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ ມີ ດັ່ງນີ້ :

1. ລາຍຮັບຈາກງົບປະມານຂອງລັດ;
2. ລາຍຮັບຈາກການເຄື່ອນໄຫວຫາລາຍໄດ້ ທີ່ຖືກຕ້ອງຕາມກົດໝາຍ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ;
3. ລາຍຮັບຈາກການຊ່ວຍເຫລືອ ຂອງການຈັດຕັ້ງ, ບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 27. ການຄຸ້ມຄອງລາຍຮັບ**

ແນວລາວສ້າງຊາດ ແຕ່ລະຂັ້ນ ຄຸ້ມຄອງລາຍຮັບ ຂອງຕົນ, ປະຕິບັດລະບອບບັນຊີ ຕາມລະບຽບກົດໝາຍ ກ່ຽວກັບການເງິນ ແລະ ງົບປະມານ.

**ມາດຕາ 28. ການນຳໃຊ້ລາຍຮັບ**

ແນວລາວສ້າງຊາດ ແຕ່ລະຂັ້ນ ນຳໃຊ້ລາຍຮັບ ເຂົ້າໃນວຽກງານ ດັ່ງນີ້:

1. ການເຄື່ອນໄຫວວຽກງານ ຫລື ການຂະຫຍາຍກິດຈະການຕ່າງໆ ຕາມແຜນການ ຂອງແນວລາວສ້າງຊາດ;
2. ການກະກຽມ ແລະ ດຳເນີນ ກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂັ້ນຂອງຕົນ;
3. ການອຸປະຖຳ ແລະ ສະໜັບສະໜູນ ການຈັດຕັ້ງ ຫລື ພາກສ່ວນອື່ນ ຕາມເງື່ອນໄຂຕົວຈິງ;
4. ການປະຕິບັດ ນະໂຍບາຍຕ່າງໆ ແລະ ວຽກງານອື່ນ ຂອງແນວລາວສ້າງຊາດ ຕາມລະບຽບການ.

## ໝວດທີ VII
## ຂໍ້ຫ້າມ

**ມາດຕາ 29. ຂໍ້ຫ້າມ ສຳລັບກຳມະການແນວລາວສ້າງຊາດ**

ຫ້າມກຳມະການແນວລາວສ້າງຊາດ ມີ ການກະທຳ ດັ່ງນີ້ :

1. ສວຍໃຊ້ ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ຈັດຕັ້ງເປັນກຸ່ມກ້ອນ ຫລື ແບ່ງແຍກຄວາມສາມັກຄີປະຊາຊົນລາວບັນດາເຜົ່າ, ຄວາມສາມັກຄີ ພາຍໃນແນວລາວສ້າງຊາດ;
3. ກໍ່ຄວາມເສຍຫາຍ ຕໍ່ຜົນປະໂຫຍດ ຂອງການຈັດຕັ້ງ, ລວມໝູ່ ຫລື ບຸກຄົນ ໂດຍບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
4. ເມີນເສີຍຕໍ່ການປະຕິບັດໜ້າທີ່ ເປັນຕົ້ນ ບໍ່ເຂົ້າຮ່ວມກອງປະຊຸມ ໂດຍບໍ່ມີເຫດຜົນ;
5. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 30. ຂໍ້ຫ້າມ ສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ**

ຫ້າມການຈັດຕັ້ງ ແລະ ບຸກຄົນອື່ນ ມີ ການກະທຳ ດັ່ງນີ້ :

1. ຍົກຍ້າຍ ປະທານ, ຮອງປະທານ ຫລື ກຳມະການແນວລາວສ້າງຊາດ ແຕ່ລະຂັ້ນ ເວັ້ນເສຍແຕ່ ໃນກໍລະນີທີ່ມີຄວາມຈຳເປັນ ໂດຍໄດ້ຮັບຄວາມເຫັນດີຈາກແນວລາວສ້າງຊາດຂັ້ນເທິງຖັດນັ້ນ;
2. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ຄະນະກຳມະການ ຫລື ພະນັກງານ ຂອງແນວລາວສ້າງຊາດ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ;
3. ລະເມີດສິດ, ຜົນປະໂຫຍດ, ຍັກຍອກ, ສໍ້ໂກງເອົາຊັບສິນ ຂອງແນວລາວສ້າງຊາດ;
4. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ໝວດທີ VIII
## ການຄຸ້ມຄອງ ແລະ ການກວດກາ

**ມາດຕາ 31. ອົງການຄຸ້ມຄອງວຽກງານແນວລາວສ້າງຊາດ**

ອົງການຄຸ້ມຄອງວຽກງານແນວລາວສ້າງຊາດ ປະກອບດ້ວຍ:

1. ສູນກາງແນວລາວສ້າງຊາດ;
2. ແນວລາວສ້າງຊາດ ແຂວງ, ນະຄອນ;
3. ແນວລາວສ້າງຊາດ ເມືອງ, ເທດສະບານ;
4. ແນວລາວສ້າງຊາດ ບ້ານ.

**ມາດຕາ 32. ສິດ ແລະ ໜ້າທີ່ ຂອງສູນກາງແນວລາວສ້າງຊາດ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ ສູນກາງແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບແນວລາວສ້າງຊາດ ເພື່ອສະເໜີຂັ້ນເທິງ ພິຈາລະນາ;

2. ຫັນເອົາແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ -ສັງຄົມຂອງລັດ, ຍຸດທະສາດ, ແຜນນະໂຍບາຍ, ໂຄງການດຳເນີນງານ, ມະຕິກອງປະຊຸມໃຫຍ່ຂອງຕົນ ໃຫ້ເປັນແຜນງານ, ໂຄງການ ແລະ ແຜນການລະອຽດ ແລ້ວຈັດຕັ້ງປະຕິບັດ ໃຫ້ປາກົດຜົນເປັນຈິງ;
3. ໂຄສະນາ, ເຜີຍແຜ່ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບ, ໂຄງການດຳເນີນງານ ແລະ ຄຳແນະນຳ ຂອງແນວລາວສ້າງຊາດ;
4. ແນະນຳ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ, ລະບຽບກົດໝາຍ ກ່ຽວກັບແນວລາວສ້າງຊາດ ໃນຂອບເຂດທົ່ວປະເທດ;
5. ປຸກລະດົມ, ເຕົ້າໂຮມ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊົນຊັ້ນ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີ ແລະ ເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
6. ພິຈາລະນາ ການລົບລ້າງ ຫລື ການໂຈະການປະຕິບັດ ມະຕິ, ຄຳແນະນຳ, ແຈ້ງການ ແລະ ລະບຽບການອື່ນ ຂອງແນວລາວສ້າງຊາດຂັ້ນລຸ່ມ ຫລື ສະເໜີ ໃຫ້ພາກສ່ວນອື່ນທີ່ກ່ຽວຂ້ອງ ລົບລ້າງ ຫລື ໂຈະ ການປະຕິບັດນິຕິກຳດັ່ງກ່າວ ທີ່ເຫັນວ່າຂັດກັບລະບຽບກົດໝາຍ ຫລື ມະຕິ ຂອງຕົນ;
7. ພິຈາລະນາ ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ພະນັກງານແນວລາວສ້າງຊາດຂັ້ນຂອງຕົນ, ການສ້າງຕັ້ງ, ປັບປຸງ, ຍຸບເລີກ ກົງຈັກຊ່ວຍວຽກ; ແນະນຳການສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດຂັ້ນລຸ່ມ;
8. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;
9. ພົວພັນ, ປະສານສົມທົບ ແລະ ຮ່ວມມື ກັບອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງ ທັງພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມລະບຽບການ;
10. ສະຫລຸບ, ລາຍງານ ວຽກງານແນວລາວສ້າງຊາດ ໃນຂອບເຂດທົ່ວປະເທດ ຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ.

**ມາດຕາ 33. ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ ແນວລາວສ້າງຊາດ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງສູນກາງແນວລາວສ້າງຊາດ ແລະ ຂອງຕົນ ມາເປັນແຜນງານ, ໂຄງການ ແລະ ແຜນການ ເພື່ອຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບ, ໂຄງການດຳເນີນງານ ແລະ ຄຳແນະນຳ ຂອງແນວລາວສ້າງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ແນະນຳ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ, ລະບຽບກົດໝາຍ ກ່ຽວກັບແນວລາວສ້າງຊາດ ໃນຂອບເຂດ ແຂວງ, ນະຄອນ;
4. ປຸກລະດົມ, ເຕົ້າໂຮມ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊົນຊັ້ນ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີ ຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີ ແລະ ເຂົ້າຮ່ວມໃນການປົກປັກຮັກສາ, ພັດທະນາປະເທດຊາດ ແລະ ທ້ອງຖິ່ນຂອງຕົນ;
5. ພິຈາລະນາ ການລົບລ້າງ ຫລື ໂຈະການປະຕິບັດ ມະຕິ, ຄຳແນະນຳ, ແຈ້ງການ ແລະ ລະບຽບການອື່ນ ຂອງແນວລາວສ້າງຊາດຂັ້ນລຸ່ມ ຫລື ສະເໜີ ໃຫ້ພາກສ່ວນອື່ນທີ່ກ່ຽວຂ້ອງ ລົບລ້າງ ຫລື ໂຈະ ການປະຕິບັດນິຕິກຳດັ່ງກ່າວ ທີ່ເຫັນວ່າບໍ່ສອດຄ່ອງ ກັບລະບຽບກົດໝາຍ ຫລື ມະຕິ ຂອງຕົນ;
6. ພິຈາລະນາ ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ພະນັກງານແນວລາວສ້າງຊາດຂັ້ນຂອງຕົນ, ການສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ກົງຈັກຊ່ວຍວຽກຂອງຕົນ; ແນະນຳການສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດຂັ້ນລຸ່ມ;
7. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;
8. ພົວພັນ ແລະ ຮ່ວມມື ກັບອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີ ຫລື ການມອບໝາຍ ຈາກຂັ້ນເທິງຂອງຕົນ;
9. ສະຫລຸບ, ລາຍງານ ວຽກງານແນວລາວສ້າງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ສູນກາງແນວລາວສ້າງຊາດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຂອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ.

**ມາດຕາ 34. ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ ແນວລາວສ້າງຊາດ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດມະຕິ ກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງຂັ້ນເທິງ ແລະ ຂອງຕົນ ໃຫ້ປາກົດຜົນເປັນຈິງ;
2. ເຜີຍແຜ່ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບ, ໂຄງການດຳເນີນງານ ແລະ ຄຳແນະນຳ ຂອງແນວລາວສ້າງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ແນະນຳ, ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ, ລະບຽບກົດໝາຍ ກ່ຽວກັບແນວລາວສ້າງຊາດ ໃນຂອບເຂດ ເມືອງ, ເທດສະບານ;
4. ປຸກລະດົມ, ເຕົ້າໂຮມ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊົນຊັ້ນ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີ ແລະ ເຂົ້າຮ່ວມໃນການປົກປັກຮັກສາ, ພັດທະນາປະເທດຊາດ ແລະ ທ້ອງຖິ່ນຂອງຕົນ;
5. ພິຈາລະນາ ການລົບລ້າງ ຫລື ໂຈະການປະຕິບັດ ມະຕິ, ຄຳແນະນຳ, ແຈ້ງການ ແລະ ລະບຽບການອື່ນ ຂອງແນວລາວສ້າງຊາດບ້ານ, ສະເໜີໃຫ້ພາກສ່ວນອື່ນ ທີ່ກ່ຽວຂ້ອງລົບລ້າງ ຫລື ໂຈະ ການປະຕິບັດນິຕິກຳດັ່ງກ່າວ ທີ່ເຫັນວ່າບໍ່ສອດຄ່ອງ ກັບລະບຽບກົດໝາຍ ຫລື ມະຕິ ຂອງແນວລາວສ້າງຊາດ;
6. ພິຈາລະນາ ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ພະນັກງານແນວລາວສ້າງຊາດຂັ້ນຂອງຕົນ, ການສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ກົງຈັກຊ່ວຍວຽກຂອງຕົນ ເພື່ອສະເໜີໃຫ້ການຈັດຕັ້ງທີ່ກ່ຽວຂ້ອງພິຈາລະນາ;
7. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;
8. ສະຫລຸບ, ລາຍງານ ວຽກງານແນວລາວສ້າງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ແນວລາວສ້າງຊາດ ແຂວງ, ນະຄອນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຂອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 35. ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ບ້ານ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ ແນວລາວສ້າງຊາດ ບ້ານ ມີ ສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດມະຕິ ກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນຂອງຂັ້ນເທິງ ແລະ ຂອງຕົນ ໃຫ້ປາກົດຜົນເປັນຈິງ;
2. ເຜີຍແຜ່ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບ, ໂຄງການດຳເນີນງານ ແລະ ຄຳແນະນຳ ຂອງແນວລາວສ້າງຊາດ ໃນຂອບເຂດບ້ານຂອງ ຕົນ;
3. ປຸກລະດົມ, ເຕົ້າໂຮມ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊົນຊັ້ນ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຄວາມສາມັກຄີ ແລະ ເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ບ້ານຂອງຕົນ;
4. ເຂົ້າຮ່ວມໃນການໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆ ພາຍໃນປະຊາຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ຕິດຕາມ ການເຄື່ອນໄຫວວຽກງານຂອງແນວລາວສ້າງຊາດ ແລະ ການພັດທະນາບ້ານຂອງຕົນ;
6. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;
7. ສະຫລຸບ, ລາຍງານ ວຽກງານແນວລາວສ້າງຊາດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕໍ່ແນວລາວສ້າງຊາດ ເມືອງ, ເທດສະບານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຂອງບ້ານ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 36. ອົງການກວດກາວຽກງານແນວລາວສ້າງຊາດ**

ອົງການກວດກາວຽກງານແນວລາວສ້າງຊາດ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານແນວລາວສ້າງຊາດ ຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 31 ຂອງກົດໝາຍສະບັບນີ້.

**ມາດຕາ 37. ສິດ ແລະ ໜ້າທີ່ ຂອງອົງການກວດກາວຽກງານແນວລາວສ້າງຊາດ**

ອົງການກວດກາວຽກງານແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາສະພາບການຈັດຕັ້ງປະຕິບັດ ກົດໝາຍ, ກົດລະບຽບ, ໂຄງການດໍາເນີນງານ ແລະ ມະຕິກອງປະຊຸມ ແນວລາວສ້າງຊາດ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ;
2. ກວດກາການຄຸ້ມຄອງ, ນໍາໃຊ້ ແລະ ປະຕິບັດນະໂຍບາຍ ຕໍ່ຄະນະກໍາມະການແນວລາວສ້າງຊາດ, ພະນັກງານ ແລະ ລັດຖະກອນ ຂອງແນວລາວສ້າງຊາດ;
3. ກວດກາການຄຸ້ມຄອງ, ນໍາໃຊ້ ງົບປະມານ, ວັດຖຸ ແລະ ຊັບສິນ ຂອງແນວລາວສ້າງຊາດ;
4. ກວດກາການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຄະນະກໍາມະການແນວລາວສ້າງຊາດ, ພາຄີ, ພະນັກງານ ແລະ ລັດຖະກອນ ຂອງແນວລາວສ້າງຊາດ;
5. ເຂົ້າຮ່ວມ ຕິດຕາມ, ກວດກາ ການເຄື່ອນໄຫວ ຂອງອົງການລັດບໍລິຫານ, ສະມາຊິກສະພາແຫ່ງຊາດ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ພະນັກງານ ແລະ ລັດຖະກອນທົ່ວໄປ;
6. ຕິດຕາມ, ກວດກາ ການແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຂຶ້ນ ຕາມຄວາມຮັບຜິດຊອບຂອງຕົນ;
7. ສະເໜີນໍາໃຊ້ວິທີການ ແລະ ມາດຕະການແກ້ໄຂ ຜົນຂອງການກວດກາ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ ໃນລະບຽບກົດໝາຍ.

**ມາດຕາ 38. ປະເພດ ການກວດກາ**

ການກວດກາ ມີ ສອງປະເພດ ດັ່ງນີ້:

1. ການກວດກາພາຍໃນ ແມ່ນ ການກວດກາ ຂອງການຈັດຕັ້ງແນວລາວສ້າງຊາດ ແຕ່ລະຂັ້ນ;

2. ການກວດກາພາຍນອກ ແມ່ນ ການກວດກາ ຂອງການຈັດຕັ້ງ ແລະ ບຸກຄົນພາຍນອກ ຕໍ່ແນວລາວສ້າງຊາດ ເຊັ່ນ: ສະພາແຫ່ງຊາດ, ຄະນະກຳມະການກວດກາ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ການກວດກາຂອງພົນລະເມືອງ.

**ມາດຕາ 39. ຮູບການ ການກວດກາ**

ຮູບການ ການກວດກາ ມີ ດັ່ງນີ້:

1. ການກວດກາປົກກະຕິ ຕາມແຜນການວຽກງານ;
2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງບໍ່ໄດ້ແຈ້ງໃຫ້ຊາບລ່ວງໜ້າ.

ການກວດກາປົກກະຕິ ຕາມແຜນການວຽກງານ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ຊຶ່ງບໍ່ໄດ້ແຈ້ງໃຫ້ຊາບລ່ວງໜ້າ ແມ່ນ ການກວດກາທີ່ຮີບດ່ວນໂດຍບໍ່ໄດ້ແຈ້ງລ່ວງໜ້າ ໃຫ້ເປົ້າໝາຍຖືກກວດກາຊາບ.

## ໝວດທີ IX
## ລະບອບ ແບບແຜນ ວິທີເຮັດວຽກ ຂອງແນວລາວສ້າງຊາດ

**ມາດຕາ 40. ລະບອບວິທີເຮັດວຽກ**

ແນວລາວສ້າງຊາດ ມີລະບອບວິທີເຮັດວຽກ ຕາມຫລັກການລວມສູນປະຊາທິປະໄຕ ສົມທົບກັບຫລັກການຕື່ນຕົວ, ສະໝັກໃຈ, ປຶກສາຫາລື ຢ່າງມີປະຊາທິປະໄຕ ເພື່ອຄວາມເປັນເອກະພາບ.

ແນວລາວສ້າງຊາດ ເອົາກອງປະຊຸມເປັນບ່ອນປຶກສາຫາລື, ເຮັດວຽກເປັນໝູ່ຄະນະ ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ ແລະ ຕົກລົງບັນຫາດ້ວຍການລົງມະຕິ ຕາມສຽງສ່ວນຫລາຍ.

ຄະນະກຳມະການແນວລາວສ້າງຊາດ ເພີ່ມທະວີຄວາມຮັບຜິດຊອບຂອງຕົນ ໂດຍສົມທົບກັບຄວາມຮັບຜິດຊອບ ຂອງກຳມະການແນວລາວສ້າງຊາດ.

ໃນເວລາປະສານສົມທົບກັບພາຄີນັ້ນ ແນວລາວສ້າງຊາດ ຕ້ອງເຄົາລົບລັກສະນະຄວາມເປັນເອກະລາດ ຂອງພາຄີ ດັ່ງກ່າວ.

**ມາດຕາ 41. ແບບແຜນວິທີເຮັດວຽກ**

ແນວລາວສ້າງຊາດ ເຮັດວຽກຢ່າງມີແຜນການ, ແບ່ງງານ, ແບ່ງຄວາມຮັບຜິດຊອບ, ມີການກວດກາ, ສະຫລຸບ, ຖອດຖອນບົດຮຽນ ແລະ ປະຕິບັດລະບອບລາຍງານ, ຂໍຄວາມເຫັນຈາກຂັ້ນ

ເທິງຂອງຕົນ, ປະສານສົມທົບກັບການຈັດຕັ້ງຕ່າງໆ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ.

## ໝວດທີ X
## ວັນສ້າງຕັ້ງ, ເຄື່ອງໝາຍ ແລະ ຕາປະທັບ ຂອງແນວລາວສ້າງຊາດ

### ມາດຕາ 42. ວັນສ້າງຕັ້ງແນວລາວສ້າງຊາດ

ວັນສ້າງຕັ້ງແນວລາວສ້າງຊາດ ແມ່ນ ວັນທີ 13 ສິງຫາ 1950.

ແນວລາວສ້າງຊາດແຕ່ລະຂັ້ນ ຮ່ວມກັບປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ຈັດຕັ້ງສະເຫລີມສະຫລອງວັນດັ່ງກ່າວ ໃຫ້ເປັນວັນສາມັກຄີປອງດອງທົ່ວປວງຊົນ ໃນທຸກໆປີ ເພື່ອທວນຄືນເຖິງມູນເຊື້ອປະຫວັດສາດ ອັນສະຫງ່າອົງອາດ ແລະ ຜົນງານຂອງຕົນ.

### ມາດຕາ 43. ເຄື່ອງໝາຍ

ແນວລາວສ້າງຊາດ ມີເຄື່ອງໝາຍ, ກາໝາຍ ແລະ ທຸງສະເພາະຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 44. ຕາປະທັບ

ໃນການເຄື່ອນໄຫວວຽກງານ ແນວລາວສ້າງຊາດ ແຕ່ລະຂັ້ນ ມີຕາປະທັບສະເພາະ ຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 45. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນການປຸກລະດົມ, ເຕົ້າໂຮມຄວາມສາມັກຄີທົ່ວປວງຊົນ ໃຫ້ເປັນປຶກແຜ່ນແໜ້ນໜາ ຈະໄດ້ຮັບການຍ້ອງຍໍ ຫລື ປະຕິບັດນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 46. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫລື ດຳເນີນຄະດີ ຕາມລະບຽບກົດໝາຍ ແລ້ວແຕ່ກໍລະນີເບົາ ຫລື ໜັກ.

## ໝວດທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 47. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສູນກາງແນວລາວສ້າງຊາດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 48. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງ ເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ